ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 0242/ກທຄວ.ອຄ

ນະຄອນຫລວງວຽງຈັນ,ວັນທີ 07 ມີນາ 2019

ເຖິງ: ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ,ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ.

ເລື່ອງ: ການຮັບເອກະສານຄຳຮ້ອງສະເໜີປ່ຽນແປງເນື້ອທະບຽນວິສາຫະກິດທີ່ຍັງບໍ່ທັນໄດ້ມີເລກປະຈຳຕົວຜູ້ເສຍອາກອນໃນໃບທະບຽນວິສາຫະກິດໃນໄລຍະຜ່ານມາ.

- ອີງຕາມບົດບັນທຶກການມອບວຽກການພິມເລກປະຈຳຕົວຜູ້ເສຍອາກອນລະຫວ່າງກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດສະບັບລົງວັນທີ 15 ຕຸລາ 2018
- ອີງຕາມການຈັດຕັ້ງປະຕິບັດລະບົບການເຊື່ອມຕໍ່ຂອງສອງຂະແໜງການຕົວຈິງ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ,ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງເພື່ອຊາບ ແລະຈັດຕັ້ງປະຕິບັດເວລາວິສາຫະກິດມາຍື່ນເອກະສານປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ດັ່ງລຸ່ມນີ້:

1. ວິສາຫະກິດ ທີ່ອອກທະບຽນວິສາຫະກິດ ກ່ອນລະບົບເຊື່ອມກັບອາກອນແຕ່ຍັງບໍ່ທັນໄດ້ລະບຸເລກປະຈຳຕົວຜູ້ເສຍອາກອນໃສ່ໃນໃບທະບຽນວິສາຫະກິດ ເວລາປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນໃຫ້ອັດສຳເນົາໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ (12ຕົວເລກ) ມາພ້ອມ;

2. ໃນກໍລະນີວິສາຫະກິດທີ່ບໍ່ທັນມີເລກປະຈຳຕົວຜູ້ເສຍອາກອນ(12ຕົວເລກ)ແມ່ນແນະນຳຜູ້ລົງທຶນໄປປະສານເອົານຳຂະແໜງສວຍສາອາກອນກ່ອນ ບໍ່ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຮັບເອກະສານຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດເທື່ອ ຖ້າບໍ່ທັນມີເລກປະຈຳຕົວຜູ້ເສຍອາກອນມາພ້ອມ ທັງນີ້ກໍ່ເພາະວ່າການປ່ຽນແປງເນື້ອທະບຽນວິສາຫະກິດຕ້ອງໄດ້ເອົາຕົວເລກດັ່ງກ່າວມາປ້ອນເຂົ້າໃນໂປແກຣມທະບຽນວິສາຫະກິດກ່ອນ ບໍ່ດັ່ງນັ້ນລະບົບຈະບໍ່ສາມາດປິ້ນໃບທະບຽນວິສາຫະກິດອອກມາໄດ້ ເຊິ່ງການເຊື່ອມລະບົບກັບອາກອນແມ່ນສາມາດເຊື່ອມໄດ້ສະເພາະການຂຶ້ນທະບຽນວິສາຫະກິດໃໝ່ເທົ່ານັ້ນ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ດຣ.ສົມພອງ ພຽນພິນິດ



Scanned with CamScanner